Ministry of Education and Sports

Schweizerische Eidgenossenschaft
Confédération suisse
Confederazione Svizzera
Confederaziun svizra

Swiss Agency for Development and Cooperation SDC

LUXEMBOURG AID & DEVELOPMENT

LUX DEV Luxembourg Development Cooperation Agency

SKILLS FOR TOURISM PROJECT • LAO/029

ຂໍ້ມູນລະອຽດການທ່ອງທ່ຽວ • 2020

ພາບລວມການຈ້າງງານ ແລະ ອາຊີບໃນຂະແໜງການທ່ອງທ່ຽວ ແລະ ການໂຮງແຮມ ໃນ ສປປ ລາວ

ຂໍ້ມູນສຳລັບຜູ້ຈ້າງງານ, ຜູ້ສະໜອງການຝຶກອົບຮົມ ແລະ ຜູ້ກຳນົດນະ�โยบาย

ໃນປີ 2019 ຈຳນວນນັກທ່ອງທ່ຽວ ແລະ ການສ້າງລາຍຮັບເພີ່ມຂຶ້ນ

ໃນປີ 2019, ມີນັກທ່ອງທ່ຽວສາກົນ ເຂົ້າມາທ່ຽວຕະຫຼອດລະດູ ການ ເພີ່ມຂຶ້ນເຖິງ

4.8 ລ້ານຄົນ
ຈຳນວນນັກທ່ອງທ່ຽວຕ່າງປະເທດ

+14.4% ທຽບໃສ່ ປີ 2018

ສະເລ່ຍການພັກເຊົາ ຂອງນັກທ່ອງທ່ຽວ ທັງໝົດ ແມ່ນ **5** ມື້

$935 ລ້ານ ໂດລາສະຫະລັດ
ສ້າງລາຍຮັບຈາກ ນັກທ່ອງທ່ຽວ ສາກົນໄດ້

+15.2% ທຽບໃສ່ ປີ 2018

ເພີ່ມຂຶ້ນ

ນັກທ່ອງທ່ຽວຈາກ ພາກພື້ນ

ມີຈຳນວນ **4.15** ລ້ານຄົນ
ຈຳນວນນັກທ່ອງທ່ຽວ ຈາກປະເທດອ້ອມຂ້າງເຊັ່ນ: ໄທ, ຫວຽດນາມ, ຈີນ, ກຳປູເຈຍ ແລະ ມຽນມ້າ

ກວາມເອົາ **87%** ຂອງນັກທ່ອງທ່ຽວທັງໝົດ

ຈຳນວນນັກທ່ອງທ່ຽວສາກົນ

ທີ່ມາຈາກປະເທດອື່ນໆ ລວມມີ **632,000** ຄົນ ກວາມເອົາ **13%** ຂອງ ນັກທ່ອງທ່ຽວ ທັງໝົດ

ນັກທ່ອງທ່ຽວ ໜຶ່ງຄົນໃຊ້ຈ່າຍ **$419** ໂດລາສະຫະລັດ ຫລື ເທົ່າກັບ **$84** ໂດລາ ສະຫະ ລັດຕໍ່ມື້

ການພັກເຊົາສະເລ່ຍຄົນສຸດແມ່ນ **8** ມື້

ມີນັກທ່ອງທ່ຽວຈາກ China ຈຳນວນ

1.02 ລ້ານຄົນ

+27% ທຽບໃສ່ ປີ 2018 ຫຼື ເທົ່າກັບ

21.4% ຂອງນັກ ທ່ອງທ່ຽວທັງໝົດ

ສະເລ່ຍ ການພັກເຊົາແມ່ນ **3** ມື້

ສ້າງລາຍຮັບໄດ້ **$207** ລ້ານ ໂດລາສະຫະລັດ

80 ໂດລາສະຫະລັດຕໍ່ມື້ ຫຼື ເທົ່າກັບ

22% ການໃຊ້ຈ່າຍທັງໝົດ

ຫຼຸດລົງ

ການລະບາດຂອງເຊື້ອ ພະຍາດໄວຣັດສາຍພັນໃໝ່ **COVID-19** ມີຜົນກະທົບ ໜັກໃນປີ **2020** ໄດ້ເຮັດໃຫ້ຈຳນວນນັກທ່ອງທ່ຽວຫຼຸດລົງ

ວິສະຫະກິດຫຼາຍແຫ່ງ ປິດກິດຈະການ ຊົ່ວຄາວ ເຖິງ **60%** ນັກທ່ອງທ່ຽວສາກົນ ມີທ່າອ່ຽງຫຼຸດລົງ

ຄາດວ່າຈະເຮັດໃຫ້ ການທ່ອງທ່ຽວສູນ ເສຍລາຍຮັບເຖິງ **$500** ລ້ານ ໂດລາສະຫະລັດ

ຜົນກະທົບຂອງເຊື້ອພະຍາດໄວຣັດສາຍພັນໃໝ່ (COVID-19) ຕໍ່ການມີວຽກເຮັດງານທຳ

- ມີການລາຍງານວ່າ ການທ່ອງທ່ຽວຫຼຸດລົງ ເຮັດໃຫ້ທຸລະກິດການທ່ອງທ່ຽວ ຈຳນວນຫລາຍປິດລົງຊົ່ວຄາວ ແລະ ມີການສູນເສຍວຽກເຮັດງານທຳ.
- ທຸລະກິດຢູ່ ຫຼວງພະບາງ ແລະ ວັງວຽງ ທີ່ແນໃສ່ນັກທ່ອງທ່ຽວສາກົນເປັນສ່ວນໃຫຍ່ ແລະ ນັກທ່ອງທ່ຽວທີ່ມາພັກຜ່ອນ ແມ່ນໄດ້ຮັບຜົນກະທົບຫຼາຍທີ່ສຸດເກີນກວ່າ 80% ເຮັດໃຫ້ມີການຫຼຸດພະນັກງານລົງ 50%.
- ຢູ່ນະຄອນຫຼວງວຽງຈັນ, ມີວິສາຫະກິດຫຼາຍແຫ່ງຍັງເປີດບໍລິການ ແຕ່ມີປະມານ 65% ໄດ້ຫຼຸດຜ່ອນພະນັກງານລົງ.
- 70% ຂອງທຸລະກິດທັງໝົດ ທີ່ໄດ້ສຳຫຼວດ ໄດ້ຫຼຸດຈຳນວນພະນັກງານລົງ 38%.
- ມີພະນັກງານເພດຍິງຫຼາຍກວ່າ (40%) ຖືກປົດອອກຈາກວຽກ ເມື່ອທຽບກັບພະນັກງານເພດຊາຍທີ່ມີ (34%).

ເອກະສານອ້າງອີງ: ບົດສັງເຂບ ຂອງ ADB ເລກທີ 141 - ຜົນກະທົບຂອງເຊື້ອພະຍາດໄວຣັດສາຍພັນໃໝ່(COVID-19) ຕໍ່ວິສາຫະກິດການທ່ອງທ່ຽວ ໃນ ສປປ ລາວ: ການປະເມີນເບື້ອງຕົ້ນ, ເດືອນ ມິຖຸນາ 2020

ການປັບຕົວ ແລະ ການຝຶກອົບຮົມ

ໃນເມື່ອຂໍ້ຈຳກັດດ້ານການທ່ອງທ່ຽວສາກົນ ໄດ້ຜ່ອນຄາຍລົງ, ທຸລະກິດການທ່ອງທ່ຽວຫຼາຍແຫ່ງ ວາງແຜນຈະເປີດຄືນໃໝ່. ຄາດວ່າ ຈະຍັງຄົງຮັກສາການບັນຈຸພະນັກງານ ໃນລະດັບຂັ້ນຕ່ຳສຸດໄວ້ ໃນໄລຍະສັ້ນ. ໃນຂະນະທີ່ຂະແໜງອຸດສາຫະກຳການທ່ອງທ່ຽວ ມີການຟື້ນຕົວ ຈະມີຄວາມຕ້ອງການພະນັກງານ ທີ່ມີສີມືຢ່າງເໝາະສົມ ເພີ່ມຂຶ້ນ. ການຮັກສາອາຊີບ ແລະ ທັກສະດ້ານການທ່ອງທ່ຽວ ຈະເປັນສິ່ງສຳຄັນ ຕໍ່ການຟື້ນຟູການທ່ອງທ່ຽວ.

ຜົນສະທ້ອນຂອງການຝຶກອົບຮົມ

ຮູບແບບຂອງທັກສະໃໝ່ໆແມ່ນມີຄວາມຕ້ອງການ ເພື່ອປະຕິບັດງານຢ່າງປອດໄພ ໃນສະຖານທີ່ເຮັດວຽກຫລັງຈາກເຊື້ອພະຍາດໄວຣັດສາຍພັນໃໝ່ (COVID-19) ໄດ້ຜ່ານໄປ. ທຸລະກິດການທ່ອງທ່ຽວຈຳນວນໜຶ່ງຕ້ອງໄດ້ຮັບການແນະນຳ ແຫຼ່ງລາຍຮັບທາງເລືອກແຫ່ງອື່ນ. ທຸລະກິດອື່ນໆ ອາດຈະຕ້ອງປັບທິດທາງ, ປັບໂຄງສ້າງ ແລະ/ຫຼື ຄິດຄືນ ການດຳເນີນທຸລະກິດຂອງຕົນ. ບັນດາວິສາຫະກິດທີ່ເນັ້ນໃສ່ການດຶງດູດນັກທ່ອງທ່ຽວສາກົນກ່ອນໜ້ານີ້ຕ້ອງໄດ້ຄຳນຶງເຖິງຄວາມມັກຂອງນັກທ່ອງທ່ຽວພາຍໃນປະເທດ. ການຝຶກອົບຮົມ ແມ່ນມີຄວາມຕ້ອງການ ເພື່ອຮັບປະກັນວ່າ ພະນັກງານ ໄດ້ກຽມພ້ອມ ສຳລັບ ການປ່ຽນແປງເຫຼົ່ານີ້.

ການຝຶກອົບຮົມຍົກລະດັບສີມືແຮງງານ ທີ່ສະໜັບສະໜູນໂດຍໂຄງການ ທັກສະສຳລັບ ວຽກງານທ່ອງທ່ຽວ (LAO/ 29) ໃນທ້າຍປີ 2019, ມີແຜນງານການພັດທະນາສີມືແຮງງານ 107 ໂຄງການ ທີ່ໄດ້ດຳເນີນການຝຶກໃນ 17 ແຂວງ ແລະ ນະຄອນຫຼວງວຽງຈັນ. ມີຜູ້ເຂົ້າຮ່ວມການຝຶກອົບຮົມ ເພີ່ມຂຶ້ນຈາກ 343 ຄົນ ໃນປີ 2018; ເຖິງ 756 ໃນປີ 2019 ແລະ ຮອດເດືອນມິຖຸນາປີ 2020 ມີບຸກຄະລາກອນ ຈາກຂະແໜງອຸດສາຫະກຳ ການທ່ອງທ່ຽວ ເພີ່ມຂຶ້ນອີກ 871 ຄົນ ທີ່ໄດ້ຮັບຜົນປະໂຫຍດຈາກການຝຶກອົບຮົມການພັດທະນາສີມືແຮງງານ.



ຜູ້ຈ້າງງານ ຄວນວາງແຜນ ສຳລັບ ຄວາມຕ້ອງການພະນັກງານ ໄລຍະຍາວ ໂດຍຈັດຕັ້ງປະຕິບັດ ແຜນງານການຍົກລະດັບສີມືແຮງງານ ແລະ ທັກສະຄືນໃໝ່ເພື່ອກະກຽມພະນັກງານ ສຳລັບສະຖານທີ່ເຮັດວຽກໃໝ່. ຜູ້ໃຫ້ບໍລິການຝຶກອົບຮົມ ພາກລັດ ແລະ ເອກະຊົນ ມີຫຼັກສູດຝຶກອົບຮົມໄລຍະສັ້ນ ທີ່ຫຼາກຫຼາຍ ເພື່ອສະໜັບສະໜູນທຸລະກິດການທ່ອງທ່ຽວ

ຜູ້ຈ້າງງານ ສາມາດສົ່ງເສີມໃຫ້ພະນັກງານ ຍົກລະດັບສີມືແຮງງານ ແລະ ວຸດທິການສຶກສາຂອງເຂົາເຈົ້າ ໂດຍການນຳໃຊ້ເຕັກໂນໂລຊີ ການຮຽນທາງໄກ ແລະ ຮຽນແບບອອນລາຍ.

ເຂົ້າເບິ່ງໃນເວັບໄຊທ໌ www.typsy.com ເປັນຕົວຢ່າງ ຂອງເອກະສານການຝຶກອົບຮົມ ແບບອອນລາຍສຳລັບ ຂະແໜງການໂຮງແຮມ



ທັກສະອາຊີບ 'ໃນຄວາມຕ້ອງການ'

ເນື່ອງຈາກເປັນຂະແໜງໜຶ່ງທີ່ສະໜອງ 1 ໃນ 9 ອາຊີບ ໃນປີ 2019, ແຕ່ສິ່ງສຳຄັນແມ່ນວ່າ ການສະໜອງທາງ ດ້ານສຶກສາ ໃຫ້ສອດຄ່ອງກັບຄວາມຕ້ອງການສີມືແຮງ ງານ ຂອງອຸດສາຫະກຳການທ່ອງທ່ຽວ. ນັກວິຊາການ ດ້ານການສຶກສາ ຈະຕ້ອງໄດ້ເຮັດວຽກຮ່ວມກັບພາກ ສ່ວນກ່ຽວຂ້ອງ ເພື່ອພັດທະນາຫຼັກສູດທີ່ກ່ຽວຂ້ອງ ກັບ ວິຖີຊີວິດໃໝ່ ແລະ ມີເນື້ອໃນໄປໃນພາກ ປະຕິບັດ ຫຼາຍກວ່າເກົ່າ ເພື່ອໃຫ້ນັກຮຽນທີ່ຮຽນຈົບ ມີຄວາມ ພ້ອມໃນການເຮັດວຽກ.

ມາດຕະຖານຄວາມປອດໄພ

ນັກທ່ອງທ່ຽວໃນອະນາຄົດ ຈະມີຄວາມຕ້ອງການຫຼາຍຂຶ້ນ ແລະ ຄາດຫວັງໃນລະດັບສູງ ເລື່ອງການເບິ່ງແຍງສຸຂະພາບ ແລະ ການບໍລິການ, ສະນັ້ນ ຈະຕ້ອງມີການຝຶກອົບຮົມ ດ້ານ ສຸຂະພາບ ແລະ ຄວາມປອດໄພ. ການຈັດຕັ້ງປະຕິບັດ 'ພາກປະຕິບັດທີ່ດີ' ຂອງອົງການອະນາໄມໂລກ ຈະຄືນຄວາມ ເຊື່ອໝັ້ນ ແລະ ສ້າງຄວາມໝັ້ນໃຈ ໃຫ້ແກ່ລູກຄ້າ ວ່າ ທຸລະກິດ ສາມາດດຳເນີນງານໄດ້ຢ່າງປອດໄພ.

ເຄື່ອງມືດ້ານເຕັກໂນໂລຊີ

ວຽກການທ່ອງທ່ຽວຫຼາຍແຫ່ງ ທີ່ດຳເນີນການປະຕິບັດງານ ແລະ ຢູ່ເບື້ອງຫຼັງ ຈະຖືກນຳພາໂດຍ ເຕັກໂນໂລຊີ ເຊິ່ງມັນຈະຮຽກຮ້ອງ ໃຫ້ມີທັກສະພິເສດ. ການບໍລິການຫຼາຍຢ່າງ ແມ່ນຫັນປ່ຽນມາໃຊ້ ລະບົບການໄຮ້ການສຳພັດ. ການຊຳລະເງິນດິຈິຕອນ, ການຕະຫລາດ ດິຈິຕອນ ແລະ ການນຳໃຊ້ເຕັກໂນໂລຊີ ເພື່ອກຳນົດເປົ້າໝາຍ ແລະ ສື່ສານກັບລູກຄ້າ ຈະມີຄວາມສຳຄັນເພີ່ມຂຶ້ນ.



ໂດຍການເຮັດວຽກຮ່ວມມື ກັບຜູ້ໃຫ້ ບໍລິການດ້ານການສຶກສາ ແລະ ການນຳໃຊ້ເວທີ ທີ່ພະນັກງານ ສາມາດສ້າງຄວາມຮູ້, ທັກສະ ແລະ ວຸດທິການສຶກສາ ໃນຂະນະທີ່ ພວກເຂົາສືບຕໍ່ເຮັດວຽກ, ສະນັ້ນ ອຸດສາຫະກຳການທ່ອງທ່ຽວ ສາມາດສ້າງກຳລັງແຮງງານ ທີ່ມີສີມືໄດ້.

ສຳລັບຂໍ້ມູນກ່ຽວກັບ ຕະຫລາດແຮງງານການທ່ອງທ່ຽວ ໃຫ້ອີງໃສ່ ຂໍ້ມູນລະອຽດການທ່ອງທ່ຽວ ປີ 2018/2019 ທີ່ມີຢູ່ໃນ ເວັບໄຊທ໌ https://vientiane.luxdev.lu/en/activities/project/LAO/029

ການຊອກຫາ ແຮງງານທີ່ມີສີມື

ສະຖານການສຶກສາ ເຕັກນິກ-ວິຊາຊີບ 18 ແຫ່ງໃນ 16 ແຂວງ ແລະ ນະຄອນຫຼວງ ວຽງຈັນ ໄດ້ຈັດຕັ້ງການຮຽນ-ການສອນ ໃນຫຼັກສູດການທ່ອງທ່ຽວ. ປະຈຸບັນນີ້ ມີນັກຮຽນ ຫຼາຍກ່ວາ 2,200 ຄົນ ໄດ້ລົງທະບຽນຮຽນ ໃນ ຫຼັກສູດຊັ້ນກາງ ຂອງພາກວິຊາການທ່ອງທ່ຽວ ແລະ ໂຮງແຮມ ແລະ ມີຫລາຍກວ່າ 800 ຄົນ ທີ່ໄດ້ ຮຽນຈົບໃນເດືອນກັນຍາປີ 2020, ແລະ ນີ້ແມ່ນ ແຫຼງຂໍ້ມູນທີ່ສຳຄັນ ໃນການບັນຈຸເຂົ້າໃນວິສາຫະກິດ ທ່ອງທ່ຽວ. ຫຼັກສູດວິຊາຊີບໄລຍະສັ້ນ ຂອງ ການທ່ອງ ທ່ຽວ ແລະ ໂຮງແຮມ ແມ່ນໄດ້ດຳເນີນການສິດສອນ ຢູ່ສະຖານການສຶກສາ ເຕັກນິກ-ວິຊາຊີບ ຂອງລັດ ຈຳນວນໜຶ່ງ ແລະ ຍັງມີຢູ່ສູນຝຶກອົບຮົມ ບ່ອນອື່ນໆ.



ສຳລັບຂໍ້ມູນເພີ່ມເຕີມກ່ຽວກັບຫຼັກສູດເຫຼົ່ານີ້ ແລະ ບ່ອນທີ່ດຳເນີນການສິດສອນ ໃຫ້ເຂົ້າເບິ່ງທີ່ເວັບໄຊທ໌ **www.thlaos.com**

ການທ່ອງທ່ຽວຈະຟື້ນຕົວ

ຂະແໜງການທ່ອງທ່ຽວ ຈະເອົາຊະນະການແຜ່ລະບາດ. ການເພີ່ມຂຶ້ນຂອງນັກທ່ອງທ່ຽວສາກົນ ທີ່ເປັນການສະໜັບສະໜູນການເຕີບໂຕຂອງການທ່ອງທ່ຽວ ກ່ອນການແຜ່ລະບາດຂອງເຊື້ອພະຍາດໄວຣັດສາຍພັນໃໝ່ (COVID-19) ເຊິ່ງບົ່ງຊີ້ໃຫ້ເຫັນວ່າ ຂະແໜງການທ່ອງທ່ຽວ ຈະຟື້ນຕົວ. ສຳລັບການຈະເກີດຂຶ້ນເມື່ອໃດ ແລະ ແນວໃດ ແລະ ຈະມີລັກສະນະແບບໃດ ແມ່ນຂຶ້ນກັບເງື່ອນໄຂ ດັ່ງລຸ່ມນີ້:

- ການຍົກເລີກຂໍ້ຈຳກັດການເດີນທາງລະຫວ່າງປະເທດ
- ຄວາມສາມາດຂອງທຸລະກິດໃນການຢູ່ລອດ ແລະ ຟື້ນຕົວ
- ມາດຕະຖານດ້ານສຸຂະພາບ ແລະ ຄວາມປອດໄພ ມີການປັບປຸງ
- ຄວາມອາດສາມາດ ໃນການປະຕິບັດການຮັກສາໄລຍະຫ່າງທາງສັງຄົມ
- ຫຼຸດການໃຫ້ບໍລິການ ລົງ ຫຼື ປັບຮູບແບບໃໝ່
- ທຸລະກິດປັບທິດທາງເຂົ້າສູ່ຕະຫຼາດໃໝ່
- ຄວາມສາມາດຂອງພະນັກງານ ໃນການປັບໂຕໃຫ້ເຂົ້າກັບການປະຕິບັດງານແບບໃໝ່

ປັດໄຈທີ່ມີອິດທິພົນໃນການເລີ່ມຕົ້ນການທ່ອງທ່ຽວຄືນໃໝ່

- ຂະແໜງການທີ່ກ່ຽວຂ້ອງກັບການທ່ອງທ່ຽວ, ເຊິ່ງກວມເອົາ 11% ຂອງການມີວຽກເຮັດງານທຳທັງໝົດ, ແມ່ນບູລິມະສິດ ຂອງ ລັດຖະບານ ສປປ ລາວ ໃນການສົ່ງເສີມ ແລະ ໃຫ້ການສະໜັບສະໜູນ.
- ສປປ ລາວ ຖືວ່າເປັນຈຸດໝາຍປາຍທາງ ທີ່ມີ 'ຄວາມສຽງຕ່ຳ', ຊ່ວຍເພີ່ມຄວາມເຊື່ອໝັ້ນຂອງຜູ້ບໍລິໂພກ.
- ກຳລັງມີການກະຕຸ້ນການທ່ອງທ່ຽວພາຍໃນປະເທດ.
- ສະຖານທີ່ທ່ອງທ່ຽວທາງວັດທະນະທຳ ແລະ ທຳມະຊາດ ເຊິ່ງວ່າ ສປປ ລາວ ມີຊື່ສຽງ ຈະເປັນຊັບສິນຫຼັກ ໃນການຟື້ນຟູຂະແໜງການດັ່ງກ່າວ.

ສົ່ງເສີມການທ່ອງທ່ຽວພາຍໃນປະເທດ

ໃນປີ 2019, ຕົວເລກປະຊາຊົນລາວ ໄດ້ເດີນທາງທ່ອງທ່ຽວ

- 2.3 ລ້ານເທື່ອຄົນ ທ່ອງທ່ຽວພາຍໃນ
- 2.6 ລ້ານເທື່ອຄົນ ທ່ອງທ່ຽວຕ່າງປະເທດ

ສິ່ງທ້າທາຍແມ່ນການຫັນຕະຫຼາດການທ່ອງທ່ຽວຕ່າງປະເທດ ໃຫ້ກາຍເປັນຕະຫຼາດທ່ອງທ່ຽວພາຍໃນປະເທດ. ການໂຄສະນາການຕະຫຼາດ "ລາວທ່ຽວລາວ", ເຊິ່ງໄດ້ເປີດຕົວ ໃນເດືອນກັນຍາປີ 2020, ມີເປົ້າໝາຍແນໃສ່ຊຸກຍູ້ການທ່ອງທ່ຽວພາຍໃນປະເທດ.

ຖ້າຢາກສະໜັບສະໜູນ ແລະ/ຫຼື ເຂົ້າຮ່ວມ ໃນກິດຈະກຳດັ່ງກ່າວ ໃຫ້ຕິດຕໍ່ ສະພາການຄ້າ ແລະ ອຸດສາຫະກຳ ແຫ່ງຊາດລາວ (LNCCI).

www.facebook.com/laothiaolao
ຕິດຕໍ່ https://lncci.la

ການທ່ອງທ່ຽວພາຍໃນ ຈະນຳໄປສູ່ການຟື້ນຟູໃນຂະແໜງການນີ້
ບັນດາວິສາຫະກິດທີ່ດຶງດູດນັກທ່ອງທ່ຽວພາຍໃນ ແມ່ນຈະສາມາດຟື້ນຄືນສະພາບໄດ້ໄວກວ່າ

ສະພາບຕະຫຼາດແຮງງານທີ່ມີການປ່ຽນແປງຕະຫຼອດເວລາ ແລະ ການຂາດຂໍ້ມູນ ທີ່ມີສາຍເຫດມາຈາກການແຜ່ລະບາດຂອງເຊື້ອພະຍາດໄວຣັດສາຍພັນໃໝ່ (COVID-19) ໝາຍຄວາມວ່າ ຂໍ້ມູນບາງອັນທີ່ນຳສະເໜີຢູ່ໃນນີ້ ອາດຈະມີການປ່ຽນແປງ ນັບຕັ້ງແຕ່ມີການເຜີຍແຜ່. ຂໍແນະນຳໃຫ້ຜູ້ໃຊ້ຂໍ້ມູນ ໃຫ້ອ້າງອີງໃສ່ແຫຼ່ງອື່ນຕື່ມອີກ ສຳລັບ ການຊອກຂໍ້ມູນເພີ່ມເຕີມ ກ່ຽວກັບ ເສດຖະກິດທ້ອງຖິ່ນ ແລະ ຕະຫລາດແຮງງານ.

ວາລະສານຂ່າວຂໍ້ມູນຂ່າວສານຕະຫລາດແຮງງານນີ້ ແມ່ນໄດ້ຮັບແຫຼ່ງຂໍ້ມູນມາຈາກຫຼາຍບ່ອນ ເຊັ່ນ: *ການສຳຫຼວດວິສາຫະກິດທ່ອງທ່ຽວ ແລະ ການໂຮງແຮມ ປີ 2018 ກ່ຽວກັບ ການມີວຽກເຮັດງານທຳ ແລະ ສີມືແຮງງານ ໃນ ສປປ ລາວ* ເຊິ່ງໄດ້ຮັບການສະໜັບສະໜູນ ຈາກໂຄງການທັກສະ ສຳລັບວຽກງານທ່ອງທ່ຽວ (LAO/029); *ບົດລາຍງານສະຖິຕິກ່ຽວກັບການທ່ອງທ່ຽວໃນລາວ 2019*, ທີ່ຈັດພິມໂດຍ ກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ແຫ່ງ ສປປ ລາວ; ບົດສັງເຂບ ຂອງທະນາຄານພັດທະນາອາຊີ (ADB) ເລກທີ 141 - *ຜົນກະທົບຂອງການແຜ່ລະບາດຂອງເຊື້ອພະຍາດໄວຣັດສາຍພັນໃໝ່ (COVID-19) ຕໍ່ວິສາຫະກິດການທ່ອງທ່ຽວໃນ ສປປ ລາວ: ການປະເມີນ ຜົນເບື້ອງຕົ້ນ, ເດືອນມີຖຸນາ ປີ2020. ການສຳຫຼວດຂອງທະນາຄານພັດທະນາອາຊີ (ADB) ໄດ້ສ້າງແບບແຜນວິທີ ການສຳຫຼວດວິສາຫະກິດທ່ອງທ່ຽວ ແລະ ໂຮງແຮມ ປີ 2018 ຂອງການມີວຽກເຮັດງານທຳ ແລະ ສີມືແຮງງານ ໃນ ສປປ ລາວ.*

* ໂຄງການທັກສະສຳລັບ ວຽກງານທ່ອງທ່ຽວ ໄດ້ສະໜັບສະໜູນ ການປັບປຸງວຽກງານອາຊີວະສຶກສາ ແລະ ພັດທະນາສີມືແຮງງານ ໃນຂະແໜງການທ່ອງທ່ຽວ ແລະ ໂຮງແຮມ ໃນ ສປປ ລາວ.

ຈຸດເນັ້ນໜັກອັນສະເພາະຂອງໂຄງການ ແມ່ນໃຫ້ການສະໜັບສະໜູນ ຜູ້ທີ່ມີພື້ນຖານທີ່ດ້ອຍໂອກາດເພື່ອໃຫ້ມີທັກສະທີ່ຈຳເປັນ ໃນການເຮັດວຽກຢູ່ໃນໂຮງແຮມ, ຮ້ານອາຫານ ແລະ ຂະແໜງເສດຖະກິດການທ່ອງທ່ຽວ ທີ່ເຕີບໃຫຍ່ຂຶ້ນ. ແນວຄິດລິເລີ່ມຈຳນວນໜຶ່ງ ທີ່ກ່າວເຖິງໃນວາລະສານຂ່າວນີ້ ແມ່ນໄດ້ຮັບການສະໜັບສະໜູນຈາກໂຄງການນີ້.

ໂຄງການທັກສະສຳລັບ ວຽກງານທ່ອງທ່ຽວ ແມ່ນໄດ້ຮັບການສະໜັບສະໜູນທຶນ ໂດຍລັດຖະບານ ແຫ່ງ ສປປ ລາວ, ລັດຖະບານລຸກຊຳບວກ ແລະ ລັດຖະບານສະວິດເຊີແລນ, ແລະ ຈັດຕັ້ງປະຕິບັດໂດຍ ກະຊວງ ສຶກສາທິການ ແລະ ກີລາ ແຫ່ງ ສປປ ລາວ ແລະ ອົງການລຸກຊຳບວກເພື່ອການພັດທະນາ (LuxDev).

ເດືອນພະຈິກ 2020

ໂຄງການທັກສະສຳລັບ ວຽກງານທ່ອງທ່ຽວ (LAO/029)
ຖະໜົນ ຊຸນບູລົມ, ບ້ານວັດຈັນ, ເມືອງຈັນທະບູລີ,
ນະຄອນຫຼວງວຽງຈັນ, ສປປ ລາວ
ໂທ: +856 21 253 156 ແຟັກ: +856 21 253 157
ອີເມວ: lao029@luxdev.lu

ຈັດພິມໂດຍ: ກະຊວງສຶກສາທິການ ແລະ ກີລາ
ຖະໜົນ ລ້ານຊ້າງ, ບ້ານຊຽງຍືນ, ເມືອງຈັນທະບູລີ,
ນະຄອນຫຼວງວຽງຈັນ, ສປປ ລາວ
ໂທ: +856 21 216 004